ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາປະຊາຊົນແຂວງ

ເລກທີ .13/ສພຂ.ຊຍ

ໄຊຍະບູລີ,ວັນທີ 16/.2./ 2023.

# ມະຕິ

## ກອງປະຊຸມສະພາປະຊາຊົນແຂວງ

## ວ່າດ້ວຍການຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດ ແຜນການເຄື່ອນໄຫວວຽກງານ ຂອງສະພາປະຊາຊົນແຂວງ ປະຈຳປີ 2022 ແລະ ທິດທາງແຜນການເຄື່ອນໄຫວວຽກງານ ປະຈຳປີ 2023

- ອີງຕາມ ກົດໝາຍ ວ່າດ້ວຍການປັບປຸງບາງມາດຕາ ຂອງກົດໝາຍ ວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍ ວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020 ມາດຕາ 59 ກອງປະຊຸມສະໄໝສາມັນປະຈຳປີ ສະພາປະຊາຊົນຂັ້ນແຂວງ.
- ອີງຕາມ ແຜນການເຄື່ອນໄຫວ ປະຈຳປີ 2022 ຂອງສະພາປະຊາຊົນແຂວງ ສະບັບເລກທີ 78/ຄປຈ.ຊຍ ລົງວັນທີ 31 ທັນວາ 2021.
- ອີງຕາມ ບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ທິດທາງແຜການ ປະຈຳປີ 2023 ຂອງສະພາປະຊາຊົນແຂວງ.

ຜ່ານການພິຈາລະນາຢ່າງເລິກເຊິ່ງ, ຖີ່ຖ້ວນ ຂອງສະມາຊິກສະພາປະຊາຊົນແຂວງ ຕໍ່ບົດລາຍງານການເຄື່ອນໄຫວວຽກຂອງສະພາປະຊາຊົນແຂວງ ປະຈຳປີ 2022 ແລະ ທິດທາງແຜນການເຄື່ອນໄຫວວຽກງານປະຈຳປີ 2023.

## ກອງປະຊຸມ ຕົກລົງ:

**ມາດຕາ 1:** ຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ຂອງສະພາປະຊາຊົນແຂວງ ປະຈຳປີ 2022.

ກອງປະຊຸມໄດ້ສະແດງຄວາມຊົມເຊີຍ ຕໍ່ສະພາປະຊາຊົນແຂວງ ທີ່ມີຄວາມພະຍາຍາມສູ້ຊົນ ປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ມີຜົນສຳເລັດຫຼາຍດ້ານ. ກອງປະຊຸມເຫັນດີຮັບຮອງເອົາ ບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ພົ້ນເດັ່ນແມ່ນ ໄດ້ຈັດຕັ້ງການທາບທາມຄຳເຫັນໃສ່ຮ່າງກົດໝາຍໄດ້ 21 ສະບັບ; ເຂົ້າຮ່ວມທາບທາມຮ່າງກົດໝາຍທີ່ກະຊວງກ່ຽວຂ້ອງ ຈັດຂຶ້ນ 12 ສະບັບ; ຈັດຕັ້ງການປະເມີນກົດໝາຍຕິດພັນກັບວາລະແຫ່ງຊາດ ໄດ້ 8 ສະບັບ; ຮັບຮອງນິຕິກຳໃຕ້ກົດໝາຍຂອງອົງການປົກຄອງແຂວງ 8 ສະບັບ; ສ້າງນິຕິກຳ ຮັບໃຊ້ວຽກງານສະພາປະຊາຊົນແຂວງ ໄດ້ 3 ສະບັບ.

- ພິຈາລະນາເນື້ອໃນຕ່າງໆໃນ ກອງປະຊຸມສະໄໝສາມັນ ແລະ ກອງປະຊຸມຄະນະປະຈຳສະພາປະຊາຊົນແຂວງໄດ້ 75 ເນື້ອໃນ, ອອກເປັນມະຕິ 15 ສະບັບ; ຄົ້ນຄວ້າ, ພິຈາລະນາ ແລະ ຮັບຮອງເອົາການແຕ່ງຕັ້ງ, ຍົກຍ້າຍ ບຸກຄະລາກອນຂອງແຂວງ ໄດ້ 17 ທ່ານ; ປະເມີນບຸກຄະລາກອນ ທີ່ລາຍງານ, ຊີ້ແຈງ ແລະ ຕອບຄຳຊັກຖາມ ໃນກອງປະຊຸມສະໄໝສາມັນເທື່ອທີ 2, ເທື່ອທີ 3 ຂອງສະພາປະຊາຊົນແຂວງ ຊຸດທີ II ໄດ້ 2 ຄັ້ງ.

- ລົງຕິດຕາມກວດກາ ລັດຖະທຳມະນູນ, ກົດໝາຍ, ນິຕິກຳໃຕ້ກົດໝາຍ, ມະຕິກອງປະຊຸມສະພາແຫ່ງຊາດ, ສະພາປະຊາຊົນແຂວງ, 2 ວາລະແຫ່ງຊາດ ແລະ ໂຄງການລົງທຶນຂອງລັດ, ເອກະຊົນ ທີ່ຈັດຕັ້ງປະຕິບັດຢູ່ແຂວງ ແລະ ບັນດາເມືອງ



สแกนด้วย CamScanner

ໄດ້ 44 ພາກສ່ວນ; ໄດ້ຮັບຄຳຮ້ອງຂໍຄວາມເປັນທຳ 13 ເລື່ອງ, ແກ້ໄຂແລ້ວ 10 ເລື່ອງ, ຕ້ອນຮັບປະຊາຊົນ 16 ຄັ້ງ ແລະ ໄດ້ຮັບຄຳສະເໜີຜ່ານທາງໂທລະສັບສາຍດ່ວນ 45 ເລື່ອງ.

- ເຂົ້າຮ່ວມ ແລະ ຈັດ ຝຶກອົບຮົມສ້າງຄວາມເຂັ້ມແຂງດ້ານຕ່າງໆໃຫ້ສະມາຊິກສະພາປະຊາຊົນແຂວງ ແລະ ພະນັກງານ ໄດ້ 10 ຄັ້ງ; ປັບປຸງກົງຈັກຊ່ວຍວຽກ ຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ ໄຊຍະບູລີ, ລ້ອງພົບປະ ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນ ໄດ້ 226 ຈຸດ, ມີ 275 ບ້ານ ມີຜູ້ເຂົ້າຮ່ວມ 23.044 ຄົນ, ຍິງ 11.939 ຄົນ ພ້ອມທັງໄດ້ຊ່ວຍເຫຼືອ ດ້ານງົບປະມານ ແລະ ວັດຖຸ ໃຫ້ອົງການຈັດຕັ້ງ, ຜູ້ມີສິດເລືອກຕັ້ງ ມູນຄ່າ 707.639,000 ກີບ, ໄດ້ຮັບຄຳສະເໜີ 170 ເນື້ອໃນ, ຊີ້ແຈງແລ້ວ 146 ເນື້ອໃນ, ພວມສືບຕໍ່ຊຸກຍູ້ແກ້ໄຂ 24 ເນື້ອໃນ; ໄດ້ເຄື່ອນໄຫວວຽກງານການຕ່າງປະເທດຮ່ວມ ສສ ຫວຽດນາມ ໄດ້ 5 ກິດຈະກຳ 7 ແຜນວຽກ ປະຕິບັດສຳເລັດ 3 ກິດຈະກຳ 5 ແຜນວຽກ ໄດ້ນຳສົ່ງ ພະນັກງານ-ລັດຖະກອນ ໄປຍົກລະດັບດ້ານພາສາຫວຽດນາມ 5 ທ່ານ, ຍິງ 1 ທ່ານ.

ມາດຕາ 2: ຮັບຮອງເອົາທິດທາງແຜນການເຄື່ອນໄຫວວຽກງານ ປະຈຳປີ 2023.

ກອງປະຊຸມເຫັນດີຮັບຮອງເອົາທິດທາງແຜນການ ເຄື່ອນໄຫວວຽກງານ ປະຈຳປີ2023 ດັ່ງນີ້:

**1. ດ້ານນິຕິກຳ.**

1) ສືບຕໍ່ປະສານສົມທົບ ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ, ອົງການປົກຄອງແຂວງ ຄົ້ນຄວ້າ ທາບທາມຮ່າງກົດໝາຍ ຈຳນວນ 25 ສະບັບ, ໃນນີ້ ສ້າງໃໝ່ 9 ສະບັບ, ປັບປຸງ 16 ສະບັບ; ຊຸກຍູ້ອົງການປົກຄອງແຂວງ ສ້າງ ແລະ ປັບປຸງ ນິຕິກຳໃຕ້ກົດໝາຍ ໃຫ້ບັນລຸ 3 ສະບັບຂຶ້ນໄປ; ປັບປຸງນິຕິກຳໃຕ້ກົດໝາຍຮັບໃຊ້ວຽກງານສະພາປະຊາຊົນແຂວງ ທີ່ຍັງບໍ່ທັນສຳເລັດ ເປັນຕົ້ນ: ນິຕິກຳ ວ່າດ້ວຍການດຳເນີນກອງປະຊຸມສະພາປະຊາຊົນແຂວງ ແລະ ການນຳໃຊ້ງົບປະມານຂອງລັດ, ການປະຢັດ ແລະ ຕ້ານການຟຸມເຟືອຍ.

2). ເອົາໃຈໃສ່ຊຸກຍູ້ ພາກສ່ວນກ່ຽວຂ້ອງໂຄສະນາເຜີຍແຜ່ ລັດຖະທຳມະນູນ, ກົດໝາຍ, ນິຕິກຳໃຕ້ກົດໝາຍ ໂດຍສະເພາະກົດໝາຍ ທີ່ຕິດພັນກັບວາລະແຫ່ງຊາດ, ຕິດພັນກັບການດຳລົງຊີວິດຂອງປະຊາຊົນ ໃຫ້ກວ້າງຂວາງ ແທດເຖິງເປົ້າໝາຍ.

3). ຕິດຕາມກວດກາ, ຊຸກຍູ້ການປະເມີນ ການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ທີ່ໄດ້ປະກາດນຳໃຊ້ໄປແລ້ວ; ຕິດຕາມກວດກາແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດຂອງແຂວງ; ບັນດາໂຄງການລົງທຶນຂອງລັດ ທີ່ເຫັນວ່າມີຄວາມຫຍຸ້ງຍາກ, ສັບສົນ ສົ່ງຜົນກະທົບຢ່າງຫຼວງຫຼາຍຕໍ່ການດຳລົງຊີວິດ ຂອງປະຊາຊົນບັນດາເຜົ່າພາຍໃນແຂວງໄຊຍະບູລີ.

4). ສືບຕໍ່ປະສານສົມທົບກັບອົງການປົກຄອງແຂວງ ເພື່ອເຊັນບົດບັນທຶກ ວ່າດ້ວຍການປະສານງານຮ່ວມລະຫວ່າງ ສະພາປະຊາຊົນແຂວງ ກັບ ອົງການປົກຄອງແຂວງ ໃຫ້ສຳເລັດ ກາຍເປັນເຄື່ອງມືໃນການປະຕິບັດພາລະບົດບາດ, ສິດ, ໜ້າທີ່ຂອງຕົນ ໃຫ້ມີຄວາມຮັດກຸມຂຶ້ນກວ່າເກົ່າ;

**2. ການຕົກລົງບັນຫາສຳຄັນຂອງທ້ອງຖິ່ນ.**

ສະພາປະຊາຊົນແຂວງ ຈະໄດ້ຄົ້ນຄວ້າ, ພິຈາລະນາ ຮັບຮອງເອົາເນື້ອໃນຕ່າງໆ ຜ່ານກົນໄກການດຳເນີນ ກອງປະຊຸມສະໄໝສາມັນ ເທື່ອທີ 5, ເທື່ອທີ 6 ແລະ ກອງປະຊຸມຄະນະປະຈຳສະພາປະຊາຊົນແຂວງ ຊຸດທີ II, ເພີ່ມທະວີການປະສານສົມທົບກັບສະພາແຫ່ງຊາດ ແລະ ອົງການປົກຄອງທ້ອງຖິ່ນຂັ້ນຕ່າງໆ ເພື່ອຮັບປະກັນການປະຕິບັດ ສິດ ແລະ ໜ້າທີ່ ຂອງສະພາປະຊາຊົນແຂວງ ໃນການຕົກລົງບັນຫາສຳຄັນຂອງແຂວງ ໃຫ້ຮັບປະກັນຄຸນນະພາບ ແລະ ປະສິດທິຜົນ.

**3. ການຕິດຕາມກວດກາ.**

ໃນປີ 2023 ສະພາປະຊາຊົນແຂວງ ຈະໄດ້ສຸມໃສ່ຕິດຕາມກວດກາບັນຫາສຳຄັນຕົ້ນຕໍ ດັ່ງນີ້:

1) ຕິດຕາມກວດກາ ດ້ວຍການການລາຍງານຂອງອົງການປົກຄອງແຂວງ, ສານປະຊາຊົນແຂວງ, ອົງການໄອຍະການປະຊາຊົນແຂວງ, ອົງການກວດສອບປະຈຳພາກເໜືອ, ອົງການກວດກາລັດແຂວງ ແລະ ພາກສ່ວນຕ່າງໆ ທີ່ກ່ຽວຂ້ອງ ໃນກອງປະຊຸມສະໄໝສາມັນ, ກອງປະຊຸມຄົບຄະນະປະຈຳປີຂອງບັນດາຄະນະກຳມະການຂອງສະພາປະຊາຊົນແຂວງ ລວມທັງການຊັກຖາມ, ຊີ້ແຈງ ຕໍ່ບັນຫາທີ່ພົ້ນເດັ່ນຂອງສັງຄົມ.



สแกนด้วย CamScanner

2) ຕິດຕາມກວດກາ ດ້ວຍການດຳເນີນກອງປະຊຸມຮ່ວມ ລະຫວ່າງ ຄະນະປະຈຳສະພາປະຊາຊົນແຂວງ ກັບ ອົງການປົກຄອງແຂວງ, ສານປະຊາຊົນແຂວງ, ອົງການໄອຍະການແຂວງ, ອົງການກວດກາສອບແຫ່ງລັດ, ອົງການກວດກາລັດ, ຄະນະປະຈຳແນວລາວສ້າງຊາດ ແລະ ພາກສ່ວນຕ່າງໆ ທີ່ກ່ຽວຂ້ອງ ເພື່ອປຶກສາຫາລື ແກ້ໄຂ ບັນຫາຂອງແຂວງ.

3) ຕິດຕາມກວດກາການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ຕິດພັນກັບ ການຈັດຕັ້ງມະຕິກອງປະຊຸມສະໄໝສາມັນ ເທື່ອທີ 3, ເທື່ອທີ 4 ຂອງສະພາປະຊາຊົນແຂວງ ຊຸດທີ II.

4) ຕິດຕາມກວດກາ ການຈັດຕັ້ງປະຕິບັດ ລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ທີ່ໄດ້ປະກາດນຳໃຊ້ໄປແລ້ວ; ຕິດຕາມກວດກາແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດຂອງແຂວງ; ບັນດາໂຄງການລົງທຶນຂອງລັດ ທີ່ເຫັນວ່າມີຄວາມຫຍຸ້ງຍາກ, ສັບສົນ ສົ່ງຜົນກະທົບຢ່າງຫຼວງຫຼາຍ ຕໍ່ການດຳລົງຊີວິດ ຂອງປະຊາຊົນບັນດາເຜົ່າພາຍໃນແຂວງໄຊຍະບູລີ.

5) ຕິດຕາມຜ່ານກົນໄກການຮັບ, ພິຈາລະນາ, ແກ້ໄຂ ຄຳສະເໜີ, ສາຍດ່ວນ ແລະ ຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນ.

6) ຕິດຕາມກວດກາການຈັດຕັ້ງປະຕິບັດໜ້າທີ່ຂອງບຸກຄະລາກອນ ທີ່ສະພາປະຊາຊົນແຂວງ ເລືອກຕັ້ງ ແລະ ຮັບຮອງເອົາການແຕ່ງຕັ້ງ.

**4. ດ້ານການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາປະຊາຊົນແຂວງ.**

1) ເພີ່ມທະວີວຽກງານການເມືອງແນວຄິດ, ຕິດພັນກັບການຍົກລະດັບທິດສະດີ, ວິຊາສະເພາະ ໃຫ້ໄດ້ 2 ທ່ານຂຶ້ນໄປ ແລະ ການປະຕິບັດນະໂຍບາຍຕ່າງໆ ຕໍ່ສະມາຊິກສະພາປະຊາຊົນແຂວງ, ພະນັກງານ-ລັດຖະກອນ, ສະມາຊິກພັກ ຕິດພັນກັບການຍູ້ແຮງຂະບວນການແຂ່ງຂັນ, ຮັກຊາດ ແລະ ພັດທະນາ.

2) ເຂົ້າຮ່ວມກອງປະຊຸມຝຶກອົບຮົມຫົວຂໍ້ຕ່າງໆ ຕາມແຜນການຂອງສະພາແຫ່ງຊາດ; ຍາດແຍ່ງງົບປະມານຈາກສະພາແຫ່ງຊາດ ແລະ ອົງການປົກຄອງແຂວງ ເພື່ອຈັດຝຶກອົບຮົມຍົກສູງຂີດຄວາມສາມາດໃຫ້ແກ່ສະມາຊິກສະພາປະຊາຊົນແຂວງ ບຸກຄະລາກອນຂອງແຂວງ ໃຫ້ໄດ້ 1 ຄັ້ງ; ປະສານສົມທົບ ກັບ ສະພາປະຊາຊົນແຂວງໃດໜຶ່ງ ເພື່ອຈັດຕັ້ງການແລກປ່ຽນບົດຮຽນເຊິ່ງກັນ ແລະ ກັນ.

3) ສືບຕໍ່ເພີ່ມທະວີການປະສານງານ ລະຫວ່າງ ສະພາປະຊາຊົນແຂວງ ກັບ ອົງການປົກຄອງທ້ອງຖິ່ນ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ, ສານປະຊາຊົນແຂວງ, ອົງການໄອຍະການປະຊາຊົນແຂວງ, ອົງການກວດສອບປະຈຳພາກເໜືອ, ອົງການກວດກາລັດແຂວງ, ເພື່ອເປັນບ່ອນອີງໃນການເຄື່ອນໄຫວວຽກງານ ໃຫ້ມີຄວາມວ່ອງໄວ, ໂປ່ງໃສ, ຮັບປະກັນຄຸນນະພາບ, ສາມາດກວດສອບໄດ້ຄວາມຖືກຕ້ອງຕາມກົດໝາຍ.

4) ສືບຕໍ່ປັບປຸງກົງຈັກການຈັດຕັ້ງ ພາຍໃນສະພາປະຊາຊົນແຂວງ, ໜ່ວຍງານຊ່ວຍວຽກຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ ແລະ ບັນຈຸຊັບຊ້ອນບຸກຄະລາກອນ ເຂົ້າໃນຕຳແໜ່ງງານໃຫ້ເໝາະສົມ.

5) ສຸມໃສ່ຊຸກຍູ້ ການຈັດຕັ້ງປະຕິບັດ ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ ໃນການຜັນຂະຫຍາຍແຜນການ ປີ 2023 ຂອງສະພາປະຊາຊົນແຂວງ; ການຄົ້ນຄວ້າປະກອບຄຳເຫັນໃສ່ຮ່າງກົດໝາຍ, ນິຕິກຳໃຕ້ກົດໝາຍ; ຕິດຕາມກວດກາ ການຈັດຕັ້ງປະຕິບັດກົດໝາຍ, ນິຕິກຳໃຕ້ກົດໝາຍ, ມະຕິກອງປະຊຸມສະພາປະຊາຊົນແຂວງ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານຂອງເມືອງ, ບັນດາໂຄງການລົງທຶນຂອງລັດ ທີ່ຈັດຕັ້ງປະຕິບັດຢູ່ແຕ່ລະເຂດເລືອກຕັ້ງເມືອງ; ການປະສານສົມທົບກັບອົງການປົກຄອງເມືອງ ເພື່ອການກະກຽມເນື້ອໃນກ່ອນກອງປະຊຸມສະພາປະຊາຊົນແຂວງແຕ່ລະຄັ້ງ.

6) ເອົາໃຈໃສ່ລົງເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນ ເທື່ອທີ 4 ແລະ ເທື່ອທີ 5 ຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງ ຕິດພັນກັບການເກັບກຳບັນຫາຕ່າງໆ ຂອງຜູ້ມີສິດເລືອກຕັ້ງ, ວິເຄາະ, ວິໄຈ ຄຳ ຈ໌



สแกนด้วย CamScanner

ເຫັນ ຂອງອົງການແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ ເພື່ອສົມທົບກັບອົງການປົກຄອງເມືອງ ແກ້ໄຂທັນເວລາ.

5. ການເຄື່ອນໄຫວວຽກງານການຕ່າງປະເທດ.

1) ສືບຕໍ່ປະຕິບັດແນວທາງການຕ່າງປະເທດຂອງພັກ, ລັດຖະບານ; ຕາມນະໂຍບາຍໃນແຕ່ລະໄລຍະຢ່າງເປັນເຈົ້າການ; ເພີ່ມທະວີພົວພັນກັບສະພາແຫ່ງຊາດ, ອົງການປົກຄອງແຂວງ ໃນການຮ່ວມມື ກັບ ປະເທດເພື່ອນມິດຍຸດທະສາດ ເພື່ອຍາດແຍ່ງບົດຮຽນ ມາພັດທະນາວຽກງານສະພາປະຊາຊົນແຂວງ.

2) ປະສານສົມທົບ ກັບ ອົງການປົກຄອງແຂວງ ເພື່ອສືບຕໍ່ສ້າງແຜນເຄື່ອນໄຫວແລກປ່ຽນບົດຮຽນ, ເຊັນບົດບັນທຶກຮ່ວມ ກັບ ແຂວງເຊີນລາ, ກວາງນິງ, ທາຍບິງ.

3) ສົມທົບກັບອົງການປົກຄອງແຂວງ ສ້າງເງື່ອນໄຂອໍານວຍຄວາມສະດວກ ໃຫ້ສະມາຊິກສະພາແຫ່ງຊາດ ປະຈໍາເຂດເລືອກຕັ້ງ ເຂົ້າຮ່ວມເຄື່ອນໄຫວກັບລັດຖະສະພາ ບັນດາປະເທດເພື່ອນມິດ, ພາກພື້ນ ແລະ ສາກົນ, ຊຸກຍູ້ສະມາຊິກສະພາປະຊາຊົນແຂວງ ເຂົ້າຮ່ວມກິດຈະກໍາພົວພັນການຕ່າງປະເທດ ນໍາອົງການປົກຄອງແຂວງ ຕາມພາລະບົດບາດຂອງຕົນ.

**ມາດຕາ 3 ການຈັດຕັ້ງປະຕິບັດ**

ຄະນະປະຈໍາສະພາປະຊາຊົນແຂວງ, ຄະນະກໍາມະການ, ຄະນະສະມາຊິກສະພາແຫ່ງຊາດ ປະຈໍາເຂດເລືອກຕັ້ງ, ແລະ ພາກສ່ວນກ່ຽວຂ້ອງ ຈັດຕັ້ງປະຕິບັດມະຕິສະບັບນີ້ຢ່າງເຂັ້ມງວດ.

**ມາຕາ 4 ຜົນສັກສິດ**

ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ສະພາປະຊາຊົນແຂວງ
ປະທານ

ເພັງນິລັບ ຄໍາພັນເພັງ



สแกนด้วย CamScanner